ທະນາຄານແຫ່ງ ສປປ ລາວ
BANK OF THE LAO PDR

ຂ່າວ NEWS



ໜ່ວຍງານຂ່າວສານ ພະແນກສັງລວມ ຫ້ອງການ ທຫລ
ໂທ /ແຟັກ ( 856-21) 260283

# ທຫລ ຈັດຕັ້ງການລະນຶກວັນສາກົນ ຢຸດຕິຄວາມຮຸນແຮງຕໍ່ແມ່ຍິງ ແລະ ເດັກຍິງ.



ໃນວັນທີ 8 ທັນວາ 2018, ທະນາຄານແຫ່ງ ສປປ ລາວ (ທຫລ) ໄດ້ຈັດຕັ້ງພິທີປາຖະກະຖາ ລະນຶກວັນສາກົນ ຢຸດຕິຄວາມຮຸນແຮງຕໍ່ແມ່ຍິງ ແລະ ເດັກຍິງ (25 ພະຈິກ) ພາຍໃຕ້ຄຳຂວັນ "ຮັບຟັງສຽງຂອງຂ້ອຍແດ່" ທີ່ສະໂມສອນ ສະຖາບັນການທະນາຄານ. ໂດຍການໃຫ້ກຽດເປັນປະທານຂອງທ່ານນາງ ບັນດິດ ປະທຸມວັນ ຮອງປະທານສູນກາງສະຫະພັນແມ່ຍິງລາວ, ພ້ອມນີ້ມີ ທ່ານນາງ ສາຍສະໝອນ ຈັນທະຈັກ ປະທານສະຫະພັນແມ່ຍິງ ທຫລ ພ້ອມດ້ວຍພາກສ່ວນທີ່ກ່ຽວຂ້ອງເຂົ້າຮ່ວມໃນພິທີຫຼາຍກວ່າ 600 ຄົນ.

ການຈັດຕັ້ງພິທີດັ່ງກ່າວ ກໍ່ເພື່ອເຮັດໃຫ້ພະນັກງານໃນຂະແໜງການທະນາຄານມີຄວາມຮັບຮູ້ ແລະ ເຂົ້າໃຈຢ່າງເລິກເຊິ່ງຕໍ່ກັບການໃຊ້ຄວາມຮຸນແຮງຕໍ່ແມ່ຍິງ ແລະ ເດັກຍິງ, ພ້ອມທັງເປັນການເຜີຍແຜ່ແນວທາງນະໂຍບາຍຂອງພັກ ແລະ ລັດໃນການສ້າງຈິດສຳນຶກ ແລະ ຈິນຕະນາການໃໝ່ກ່ຽວກັບຄວາມສະເໝີພາບລະຫວ່າງຍິງ-ຊາຍ ແລະ ໃຫ້ແມ່ຍິງມີສ່ວນຮ່ວມຢ່າງເຕັມສ່ວນໃນຂະບວນການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ -ສັງຄົມ, ພ້ອມທັງ ສ້າງສະພາບແວດລ້ອມໃນການດຳລົງຊີວິດຂອງແມ່ຍິງໃຫ້ມີກຽດສັກສີຕາມກົດໝາຍ ແລະ ມີຄວາມປອດໄພ, ປາສະຈາກການໃຊ້ຄວາມຮຸນແຮງຕໍ່ແມ່ຍິງ ແລະ ເດັກຍິງໃນສັງຄົມ.





ໃນພິທີທ່ານປະທານສະຫະພັນແມ່ຍິງ ທຫລ ໄດ້ຂຶ້ນກ່າວບົດສະຫຼຸບການຈັດຕັ້ງປະຕິບັດວຽກງານສົ່ງເສີມເພື່ອຄວາມກ້າວໜ້າຂອງແມ່ຍິງ ແລະ ຄວາມສະເໝີພາບຍິງ-ຊາຍ, ວຽກແມ່ ແລະ ເດັກ ໃນຂົງເຂດທະນາຄານ ທີ່ຕິດພັນກັບຂະແໜງການທະນາຄານ 4 ແຜນງານ ໃນໄລຍະກາງສະໄໝ ປີ 2016-2018 ແລະ ທິດທາງແຜນການທ້າຍສະໄໝ ປີ 2019-2020.

**#ຂ່າວ-ພາບ: ວັນປະເສີດ ສິມບູນຂັນ.**

**ຢູ່ເມືອງລາວ ໃຊ້ເງິນກີບລາວ ຊາດລາວກ້າວໄປ**